ກະຊວງວິທະຍາສາດແລະເຕັກໂນໂລຊີ
ພະແນກບໍລິຫານ
ເລກທີ ... 1131 ... ກວຕ
ລົງວັນທີ 12 JUN 2014
ເລກ ... 1045
ລົງເຊັນ ...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ລັດຖະບານ ເລກທີ 190 /ລບ

ນະຄອນຫຼວງວຽງຈັນ, ວັນທີ 9.6.2014

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້

## ແຜນຍຸດທະສາດການສົ່ງເສີມກາເຟລາວ ຮອດປີ 2025

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ມັງກອນ 2014, ສະບັບເລກທີ 01/ລບ, ລົງວັນທີ 29 ມັງກອນ 2014.
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 533/ກປ, ລົງວັນທີ 4/4/2014.

## ລັດຖະບານ ອອກດຳລັດ:

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ " ແຜນຍຸດທະສາດການສົ່ງເສີມກາເຟລາວ ຮອດປີ 2025 ".

ມາດຕາ 2. ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການປະສານສົມທົບ ກັບບັນດາກະຊວງ-ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ຄົ້ນຄ້ວາຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດການສົ່ງເສີມກາເຟລາວ ຮອດປີ 2025 ໃຫ້ໄດ້ຮັບຜົນດີ.

ມາດຕາ 3. ບັນດາກະຊວງ-ອົງການທຽບເທົ່າ, ນະຄອນຫຼວງ, ບັນດາແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4. ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

ທອງສິງ ທຳມະວົງ